ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 4331 /ທຄຕລ 2024

ນະຄອນຫຼວງວຽງຈັນ, ວັນທີ: 23 DEC 2024

## ໜັງສືແຈ້ງເຊີນ

## ຄັດເລືອກບໍລິສັດກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2025

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດກວດສອບ ເພື່ອເຂົ້າຮ່ວມສະເໜີລາຄາ ຄ່າບໍລິການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2025, ໂດຍອະນຸຍາດໃຫ້ທຸກໆບໍລິສັດກວດສອບ ທີ່ມີຄຸນນະວຸດທິເໝາະສົມ ແລະ ຄົບເງື່ອນໄຂ ເຂົ້າຮ່ວມ ດັ່ງນີ້:

- ເປັນບໍລິສັດທີ່ໄດ້ມາດຕະຖານ ແລະ ເປັນທີ່ຍອມຮັບຂອງສາກົນ.
- ມີໃບອະນຸຍາດດຳເນີນທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.
- ໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃຫ້ສາມາດກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ເງື່ອນໄຂຂອງບໍລິສັດກວດສອບ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

**ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດບໍລິສັດ ກວດສອບ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023-2024.
2. ບໍລິສັດກວດສອບທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນຕາມທີ່ລະບຸໄວ້ຂ້າງເທິງສາມາດ ເຂົ້າມາພົວພັນເອົາຂໍ້ມູນ (TOR) ໄດ້ທີ່ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C, ຫ້ອງຂາອອກ-ຂາເຂົ້າ, **ເລີ່ມແຕ່ວັນທີ 23/12/2024/ ຫາວັນທີ 27/12/2024 ເວລາ 08:30 ໂມງ ຫາເວລາ 15:30 ໂມງ.**
3. ກຳນົດຍື່ນຊອງລາຍລະອຽດໜ້າວຽກ ແລະ ຂໍ້ມູນຕ່າງໆ ແມ່ນໃຫ້ຍື່ນກ່ອນ **ວັນສຸກ ວັນທີ 10/01/2025 ເວລາ 15:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

**ເອກະສານຊອງທີ 2 (ປິດຊອງ):**

1. ໃບສະເໜີລາຄາໃຫ້ລະບຸລາຄາ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. **ໃນວັນອັງຄານ ວັນທີ 21/01/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ໃຫ້ບໍລິສັດຜູ້ບໍລິການຕ້ອງຖືຊອງໃບສະເໜີລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າທີ່ໄດ້ຮັບມອບສິດຢ່າງເປັນລາຍລັກອັກສອນເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ດອກຄູນ ຊັ້ນ 5 ຕຶກ C.
3. ບໍລິສັດຜູ້ບໍລິການຕ້ອງລະບຸລາຍລະອຽດ, ເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຂ້າງເທິງນັ້ນ.
4. ບໍລິສັດ ຜູ້ບໍລິການຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ແລະ ໜັງສືຄ້ຳປະກັນດັ່ງກ່າວຕ້ອງອອກໂດຍທະນາຄານພາຍໃນປະເທດລາວ ແລະ ແຍກຊອງຂອງໃຜມັນ ບໍ່ໃຫ້ໃສ່ຊອງ

ດຽວກັນນຳໃບສະເໜີລາຄາ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 21/04/2025) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ບໍລິການທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກບໍ່ໄດ້ກຳນົດເງື່ອນໄຂເລືອກຈາກລາຄາພຽງຢ່າງດຽວ, ແຕ່ຈະອີງໃສ່ປະສົບການ ແລະ ຄວາມຊຳນານງານ ແລະ ອື່ນໆທີ່ກ່ຽວຂ້ອງ.
- ແຊັກ ຫຼື ໜັງສືຄ້ຳປະກັນການປະມູນແມ່ນໃຫ້ແຍກຊອງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ບໍລິສັດຜູ້ບໍລິການທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ຊະນະການປະມູນຕ້ອງໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.

+ ການຊຳລະຄ່າບໍລິການຈະຈ່າຍເປັນງວດ ອີງຕາມໜ້າວຽກທີ່ສຳເລັດ ພາຍຫຼັງການໃຫ້ບໍລິການແຕ່ລະຄັ້ງ ແລະ ໄດ້ຮັບການຢັ້ງຢືນຈາກ ທຄຕລ.

ເຊັນ **ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຫ່ງ ສປປ ລາວ ນະຄອນຫລວງວຽງຈັນ

ບັນທະລາດ ແກ້ວປະເສີດ

**ສອບຖາມຂໍ້ມູນເພີ່ມເຕີ່ມ:**
**ທ່ານ ນ. ລັດສະໝີ ໄຊຍະສິດ ໂທ 020 77 777 879**

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ ທີ່ເຄີຍບໍລິການໃຫ້ແກ່ ທະນາຄານ | ໜ້າວຽກ | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015 ) | .... ປີ | (ໃຫ້ລະບຸ) | (ຕາມ ທຄຕລ ກຳນົດ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: